**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ສຳນັກງານນາຍົກລັດຖະມົນຕີ** | **ເລກທີ 98 /ນຍ**

ວຽງຈັນ, ວັນທີ 30-05-2001

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການກວດກາແຫ່ງລັດ

- ອີງຕາມ ມາດຕາ 60 ໝວດທີ VI ຂອງລັດຖະທຳມະນູນແຫ່ງ ສ ປ ປ ລາວ.
- ອີງຕາມ ມາດຕາ 7 ໝວດທີ II ແລະ ມາດຕາ 13 ໝວດທີ IV ຂອງກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ.
- ອີງຕາມ ການສະເໜີຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 159 /ຄຈສພ, ລົງວັນທີ 11/5/2001.

## ນາຍົກລັດຖະມົນຕີອອກດຳລັດ

### <u>ໝວດທີ I</u>

### <u>ວ່າດ້ວຍການສ້າງຕັ້ງ, ທີ່ຕັ້ງ ແລະ ພາລະບົດບາດ</u>

**ມາດຕາ 1 :** ສ້າງຕັ້ງອົງການກວດກາແຫ່ງລັດ ໂດຍຂຽນຫຍໍ້ວ່າ " ອ. ກ. ລ " ເປັນອົງການໜຶ່ງມີຖານະທຽບເທົ່າທະບວງ ສັງກັດສຳນັກງານນາຍົກລັດຖະມົນຕີ ໂດຍພາຍໃຕ້ການຊີ້ນຳໂດຍກົງຂອງນາຍົກລັດຖະມົນຕີ; ເພື່ອດຳເນີນວຽກງານກວດກາການບໍລິຫານລັດ.

**ມາດຕາ 2 :** ພາລະບົດບາດ ຂອງອົງການກວດກາແຫ່ງລັດ.

2.1. ດຳເນີນການກວດກາ, ກວດການ ການບໍລິຫານ ຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ; ບັນດາແຂວງ, ກຳແພງນະຄອນ, ເຂດພິເສດ, ເມືອງ ໃນທົ່ວປະເທດ; ບັນດາການຈັດຕັ້ງ ທີ່ຂຶ້ນກັບລັດຖະບານ ແລະບັນດາຫົວໜ່ວຍທຸລະກິດຂອງລັດໃນການຈັດຕັ້ງປະຕິບັດພາລະບົດບາດໜ້າທີ່, ກົດໝາຍ, ດຳລັດ, ຄຳສັ່ງ, ຂໍ້ກຳນົດ ແລະ ລະບຽບການຕ່າງໆຂອງລັດຖະບານ.

2.2. ຮັບພິຈາລະນາ ແລະ ຄົ້ນຄວ້ານຳສະເໜີຂັ້ນເທິງ ຫຼື ອົງການທີ່ກ່ຽວຂ້ອງ ແກ້ໄຂຄຳສະເໜີ, ຈົດໝາຍຮ້ອງຟ້ອງທີ່ພົວພັນເຖິງການຈັດຕັ້ງຂອງລັດ ແລະ ພະນັກງານ, ລັດຖະກອນທຸກຂັ້ນ ທີ່ມີສ່ວນກ່ຽວພັນເຖິງການລະເມີດກົດໝາຍ, ລະບຽບການຕ່າງໆ ໃນຫຼາຍຂົງເຂດ ໂດຍສະເພາະແມ່ນຂົງເຂດຄຸ້ມຄອງລັດ, ເສດຖະກິດ-ສັງຄົມ.

2.3. ກວດກາການປະພຶດ ແລະ ການກະທຳຂອງພະນັກງານ-ລັດຖະກອນໃນການປະຕິບັດໜ້າທີ່ ທີ່ມີການລ່ວງລະເມີດຕໍ່ກົດລະບຽບ ແລະ ບັນດາກົດໝາຍຕ່າງໆທີ່ສ້າງຄວາມເສຍຫາຍໃຫ້ແກ່ສິດຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ; ສະຫຼຸບຜົນການກວດກາແລ້ວນຳສະເໜີໃຫ້ອົງການທີ່ກ່ຽວຂ້ອງ ດຳເນີນການແກ້ໄຂໃຫ້ທັນເວລາ.

2.4. ວາງລະບຽບການ, ວິທີການ ແລະ ມາດຕະການຕ່າງໆ ເພື່ອສະກັດກັ້ນ ແລະ ສຶກສາອົບຮົມການເມືອງແນວຄິດໃຫ້ທຸກຊັ້ນຄົນໃນສັງຄົມເຂົ້າຮ່ວມຂະບວນການສະກັດກັ້ນ ແລະ ຕ້ານປະກົດການຫຍໍ້ທໍ້ຕ່າງໆ ໂດຍສະເພາະແມ່ນການສໍ້ລາດບັງຫລວງທຸກຮູບແບບ.

## <u>ໝວດທີ II</u>

## <u>ວ່າດ້ວຍໜ້າທີ່ ແລະ ຂອບເຂດສິດ</u>

ມາດຕາ 3. ໜ້າທີ່ຂອງ ອົງການກວດກາແຫ່ງລັດ.

3.1. ຂື້ນແຜນການກວດກາປະຈຳປີ ນຳສະເໜີລັດຖະບານອະນຸມັດເພື່ອເຄື່ອນໄຫວຕາມແຜນປົກກະຕິ ແລະ ຕາມຄຳສັ່ງຂອງນາຍົກລັດຖະມົນຕີ.

3.2. ຄົ້ນຄວ້າ ແລະ ສະເໜີຮ່າງກົດໝາຍ, ດຳລັດ, ຂໍ້ກຳນົດ, ລະບຽບການຕ່າງໆ ທີ່ກ່ຽວພັນເຖິງວຽກງານກວດກາ ເພື່ອນຳສະເໜີລັດຖະບານພິຈາລະນາ.

3.3. ຈັດຕັ້ງດຳເນີນການກວດກາ, ກວດການ ຕໍ່ການຈັດຕັ້ງ ແລະ ບຸກຄະລາກອນໃນອົງການບໍລິຫານລັດທຸກຂັ້ນ ແລະ ບັນດາຫົວໜ່ວຍທຸລະກິດຂອງລັດ; ຕ້ານການລະເມີດລະບຽບ, ກົດໝາຍ, ການສໍ້ລາດບັງຫຼວງ ແລະ ແກ້ໄຂຄຳຮ້ອງທຸກຂອງປະຊາຊົນ ບົນພື້ນຖານລະບຽບ ແລະ ກົດໝາຍ.

3.4. ກວດກາ ການປະຕິບັດແຜນການ ນຳໃຊ້ງົບປະມານຂອງທຸກພາກສ່ວນ ຕະຫຼອດຮອດການນຳໃຊ້ແຫຼ່ງທຶນກູ້ຢືມ ແລະ ຊ່ວຍເຫຼືອຈາກຕ່າງປະເທດ.

3.5. ກວດກາການຈັດຕັ້ງ, ການຄຸ້ມຄອງ, ການເຄື່ອນໄຫວປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອຮັບປະກັນໃຫ້ມີປະສິດທິພາບ ແລະ ຄວາມເປັນເອກະພາບໃນການເຄື່ອນໄຫວຂອງອົງການບໍລິຫານແຫ່ງລັດ.

3.6. ຄົ້ນຄວ້າວິໄຈ ແລະ ສະຫຼຸບຜົນຂອງການກວດກາ, ພ້ອມທັງສະເໜີຄວາມຄິດຄວາມເຫັນ ແລະ ມາດຕະການແກ້ໄຂ ແລ້ວລວບລວມສຳນວນເອກະສານທັງໝົດສົ່ງໃຫ້ອົງການກ່ຽວຂ້ອງດຳເນີນການແກ້ໄຂຕາມລະບຽບ ແລະ ກົດໝາຍ.

3.7. ປະສານສົມທົບກັບອົງການທີ່ກ່ຽວຂ້ອງ ນັບທັງພັກ ແລະ ລັດ ແຕ່ສູນກາງຮອດທ້ອງຖິ່ນ ເພື່ອສ້າງເງື່ອນໄຂ ອຳນວຍຄວາມສະດວກໃນການຊີ້ນຳວຽກງານກວດກາໃນແຕ່ລະຂັ້ນໃຫ້ເຄື່ອນໄຫວປົກກະຕິ ແລະ ມີປະສິດທິພາບ.

3.8. ບຳລຸງ, ກໍ່ສ້າງ, ຝຶກອົບຮົມ, ຍົກລະດັບຄວາມຮູ້ ຄວາມສາມາດດ້ານວິຊາສະເພາະໃຫ້ແກ່ພະນັກງານກວດກາຢ່າງເປັນປະຈຳ ພ້ອມກັນເອົາໃຈໃສ່ປະຕິບັດນະໂຍບາຍຕໍ່ພະນັກງານກວດກາຢ່າງເໝາະສົມ.

3.9. ຈັດຕັ້ງ ເຜີຍແຜ່ ບັນດາຂໍ້ກຳນົດ, ກົດລະບຽບຕ່າງໆ ທີ່ພົວພັນເຖິງວຽກງານກວດກາ ແລະ ກວດການພາຍໃນຕາມສາຍຕັ້ງ ກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ຂອງອົງການ ກວດກາຂັ້ນກະຊວງ ແລະ ທ້ອງຖິ່ນຢ່າງເປັນປະຈຳ ເພື່ອແນໃສ່ຮັບປະກັນ ປະສິດທິຜົນຂອງວຽກງານກວດກາ ໃຫ້ນັບມື້ນັບດີຂື້ນເປັນກ້າວໆ.

3.10. ແຈ້ງຂ່າວຜົນຂອງການກວດກາໃຫ້ມວນຊົນຮັບຮູ້ຢ່າງເປັນເອກະພາບ, ເພື່ອເປັນການສຶກສາອົບຮົມການເມືອງແນວຄິດໃນທົ່ວສັງຄົມໃຫ້ມີສະຕິຕື່ນຕົວເຂົ້າຮ່ວມຂະບວນການວຽກງານຕ້ານ ແລະ ສະກັດກັ້ນບັນດາປະກົດການຫຍໍ້ທໍ້ ແລະ ຕ້ານການສໍ້ລາດບັງຫຼວງທຸກຮູບແບບ.

3.11. ພົວພັນຮ່ວມມືວຽກງານກວດກາກັບຕ່າງປະເທດ ແລະ ບັນດາອົງການຈັດຕັ້ງສາກົນ ເພື່ອແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ກ່ຽວກັບວຽກງານກວດກາ.

ມາດຕາ 4 : ຂອບເຂດ ສິດຂອງອົງການກວດກາແຫ່ງລັດ.

4.1. ກວດກາບັນດາການຈັດຕັ້ງລັດບໍລິຫານທຸກຂັ້ນ, ທຸກຂະແໜງການ, ທົ່ວໜ່ວຍທຸລະກິດຂອງລັດ, ນອກນັ້ນຍັງຕ້ອງໄດ້ປະຕິບັດຕາມຄຳສັ່ງຂອງນາຍົກລັດຖະມົນຕີ.

4.2. ເຊື້ອເຊີນ ແລະ ທວງໃຫ້ບັນດາພາກສ່ວນ, ການຈັດຕັ້ງ, ບຸກຄົນທີ່ກ່ຽວພັນເຖິງການກວດກາສະໜອງຂໍ້ມູນ ແລະ ເອກະສານຕ່າງໆໃຫ້ອົງການກວດກາແຫ່ງລັດ ຕາມລະບຽບການຂອງວຽກງານກວດກາ.

4.3. ສະເໜີບັນດາກະຊວງ, ອົງການ, ທ້ອງຖິ່ນປະກອບພະນັກງານເຂົ້າຮ່ວມໃນການ ກວດກາໃນເມື່ອມີຄວາມຈຳເປັນ ແລະ ຕ້ອງການ.

4.4. ກວດກາຊັບສິນຂອງເປົ້າໝາຍທີ່ຖືກກວດກາ, ຖ້າມີຄວາມຈຳເປັນຕ້ອງສະເໜີອົງການທີ່ມີອຳນາດກ່ຽວຂ້ອງປະຕິບັດຕາມຂະບວນການຍຸຕິທຳ.

4.5. ສະເໜີຍົກຍ້າຍຊົ່ວຄາວ ຫຼື ສັ່ງໂຈະການຍົກຍ້າຍຕໍ່ພະນັກງານທີ່ຖືກກວດກາ ແລະ ບຸກຄົນທີ່ຕ້ານຄືນການກວດກາ.

4.6. ນຳສົ່ງສຳນວນເອກະສານ, ຂໍ້ມູນ ແລະ ຜົນການກວດກາ ໃຫ້ພາກສ່ວນກ່ຽວຂ້ອງດຳເນີນການຕໍ່ໄປຕາມລະບຽບ ແລະ ກົດໝາຍ, ຕິດຕາມຊຸກຍູ້ອົງການກ່ຽວຂ້ອງໃນການຈັດຕັ້ງແກ້ໄຂຜົນຂອງການກວດກາແລ້ວແຈ້ງຄືນໃຫ້ປະຊາຊົນຮັບຊາບ.

4.7. ສະເໜີເລື່ອນຊັ້ນ, ຍ້ອງຍໍ ແລະ ປະຕິບັດວິໄນຕໍ່ພະນັກງານ, ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

4.8. ເຂົ້າຮ່ວມກອງປະຊຸມຂອງລັດຖະບານ.

4.9. ເຊັນສັນຍາ, ອະນຸສັນຍາ, ບົດບັນທຶກກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນກ່ຽວກັບວຽກງານ ກວດກາ ຕາມການມອບໝາຍຈາກລັດຖະບານ ຫຼື ນາຍົກລັດຖະມົນຕີ.

## ໝວດທີ III

## ວ່າດ້ວຍໂຄງປະກອບການຈັດຕັ້ງ

ມາດຕາ 5 : ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ.

5.1. ອົງການກວດກາແຫ່ງລັດ ປະກອບດ້ວຍປະທານ 1 ທ່ານ ຊຶ່ງໄດ້ຮັບການແຕ່ງຕັ້ງ ແລະ ປົດຕຳແໜ່ງ ຕາມຂໍ້ 4 ມາດຕາ 53 ໝວດທີ V ຫຼື ມາດຕາ 60 ໝວດທີ VI ຂອງລັດຖະທຳມະນູນແຫ່ງ ສປປ ລາວ.

ປະທານອົງການກວດກາແຫ່ງລັດ ມີຖານະຕຳແໜ່ງ ບໍລິຫານຕ່ຳສຸດ ບໍ່ໃຫ້ຫຼຸດປະເພດ 4 ຕາມດຳລັດ 173/ນຍ ລົງວັນທີ 11/12/1993.

ອົງການກວດກາແຫ່ງລັດປະກອບມີ ຮອງປະທານຈຳນວນໜຶ່ງ ເຊິ່ງໄດ້ຮັບການແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີຕາມການສະເໜີຂອງ ຄະນະຈັດຕັ້ງສູນກາງພັກ, ບົນພື້ນຖານທີ່ໄດ້ເປັນເອກະພາບ ກັບປະທານອົງການກວດກາແຫ່ງລັດ; ມີຖານະຕຳແໜ່ງບໍລິຫານຕ່ຳສຸດບໍ່ໃຫ້ຫຼຸດປະເພດ 5 ຕາມດຳລັດ 173/ນຍ ລົງວັນທີ 11/12/1993.

ອົງການກວດກາແຫ່ງລັດ ປະກອບມີຫົວໜ້າຫ້ອງການ, ຫົວໜ້າກົມຈຳນວນໜຶ່ງ ເຊິ່ງໄດ້ຮັບການແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງ ບົນພື້ນຖານທີ່ໄດ້ເປັນເອກະພາບກັບປະທານອົງການ ກວດກາແຫ່ງລັດ ມີຕຳແໜ່ງບໍລິຫານປະເພດ 5 ຕາມດຳລັດ 173/ນຍ ລົງວັນທີ 11 ເດືອນ 12 ປີ 1993.

ອົງການກວດກາແຫ່ງລັດ ປະກອບມີຮອງຫົວໜ້າຫ້ອງການ ແລະ ຮອງຫົວໜ້າກົມຈຳນວນໜຶ່ງ ເຊິ່ງໄດ້ຮັບການແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍປະທານອົງການກວດກາແຫ່ງລັດ.

ອົງການກວດກາແຫ່ງລັດປະກອບມີພະນັກງານ, ລັດຖະກອນ ຕາມຄວາມເໝາະສົມກັບໜ້າທີ່ ແລະ ວຽກງານຕົວຈິງ.

5.2. ໂຄງປະກອບກົງຈັກການຈັດຕັ້ງ ປະກອບດ້ວຍ :

- ຫ້ອງການ.
- ກົມກວດກາລັດບໍລິຫານ.
- ກົມກວດກາເສດຖະກິດ.

ມາດຕາ 6 : ມອບໃຫ້ປະທານອົງການກວດກາແຫ່ງລັດ ເປັນຜູ້ກຳນົດພາລະບົດບາດ, ສິດ-ໜ້າທີ່ ແລະ ໂຄງປະກອບກົງຈັກການຈັດຕັ້ງຂອງຫ້ອງການ ແລະ ກົມທີ່ຂຶ້ນກັບ.

ມາດຕາ 7 : ກົງຈັກການຈັດຕັ້ງອົງການກວດກາຢູ່ຂັ້ນກະຊວງ-ອົງການທຽບເທົ່າກະຊວງແລະຫ້ອງຖິ່ນໃຫ້ຮັກສາໄວ້ຄືເກົ່າ ແລະ ຢູ່ພາຍໃຕ້ການຊີ້ນຳ ນຳພາຂອງຄະນະພັກ, ຄະນະນຳກະຊວງ, ອົງການ ແລະ ຫ້ອງຖິ່ນຕົນ; ພ້ອມກັນນັ້ນກໍຢູ່ພາຍໃຕ້ການຊີ້ນຳດ້ານວຽກງານວິຊາສະເພາະ ກ່ຽວກັບການກວດກາ ຂອງອົງການກວດກາແຫ່ງລັດ.

ມາດຕາ 8 : ວ່າດ້ວຍງົບປະມານ.

8.1. ຂັ້ນສູນກາງແມ່ນໃຫ້ໃຊ້ເງິນງົບປະມານ ຂັ້ນ 1 ເພື່ອເຄື່ອນໄຫວປະຕິບັດໜ້າທີ່ວຽກງານຕາມພາລະບົດບາດຂອງຕົນ.

8.2. ຢູ່ກະຊວງ, ອົງການ, ຫ້ອງຖິ່ນແມ່ນນຳໃຊ້ງົບປະມານນຳກະຊວງ, ອົງການ, ຫ້ອງຖິ່ນຕົນຂຶ້ນກັບ.

## ໝວດທີ IV

## ວ່າດ້ວຍລະບອບແບບແຜນວິທີເຮັດວຽກ

ມາດຕາ 9 : ອົງການກວດກາແຫ່ງລັດ ເຄື່ອນໄຫວຕາມຫຼັກການດັ່ງນີ້ :

9.1. ອົງການກວດກາແຫ່ງລັດ ເຄື່ອນໄຫວຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສ່ວນໜ້ອຍຂຶ້ນກັບສ່ວນຫຼາຍ, ບຸກຄົນຂຶ້ນກັບການຈັດຕັ້ງ, ຂັ້ນລຸ່ມຂຶ້ນກັບຂັ້ນເທິງ, ປະຕິບັດຕາມລະບອບຫົວໜ້າດຽວ.

9.2. ປະຕິບັດລະບອບປະຊຸມສາມັນ, ປະຈຳເດືອນ, ງວດ ແລະ ປະຈຳປີຢ່າງປົກກະຕິ ແລະ ລາຍງານສ່ອງແສງໃຫ້ຂັ້ນເທິງເປັນປະຈຳ.

9.3. ການເຄື່ອນໄຫວ ຕ້ອງມີແຜນການເດືອນ, 3 ເດືອນ, 6 ເດືອນ ແລະ ແຜນການປີ, ມີການສະຫຼຸບຖອດຖອນບົດຮຽນ.

9.4. ປະຕິບັດລະບອບລາຍງານ, ຂໍຄຳເຫັນຈາກຂັ້ນເທິງ, ຊີ້ນຳຂັ້ນລຸ່ມຈັດຕັ້ງປະຕິບັດເມື່ອມີບັນຫາຕ້ອງລາຍງານ ແລະ ແກ້ໄຂທັນເວລາ.

## <u>ໝວດທີ V</u>

## <u>ວ່າດ້ວຍຂໍ້ບັນຍັດມ້ອນທ້າຍ</u>

ມາດຕາ 10.. ອົງການກວດກາແຫ່ງລັດ , ຫ້ອງການ, ບັນດາກົມ, ມີກາປະທັບເປັນຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານລັດຖະການ.

ມາດຕາ 11. ມອບໃຫ້ອົງການກວດກາແຫ່ງລັດ ເປັນຜູ້ຈັດຕັ້ງຜັນຂະຫຍາຍດຳລັດສະບັບນີ້ໃຫ້ມີປະສິດຕິຜົນ.

ມາດຕາ 12. ບັນດາກະຊວງ, ອົງການ, ແຂວງ, ກຳແພງນະຄອນ, ເຂດພິເສດ ແລະ ອົງການກວດກາຂັ້ນຕ່າງໃນຂອບເຂດທົ່ວປະເທດຈົ່ງຮັບຮູ້, ຈັດຕັ້ງປະຕິບັດຕາມດຳລັດສະບັບນີ້ຢ່າງຖືກຕ້ອງ ແລະ ເຂັ້ມງວດ.

ມາດຕາ 13. ດຳລັດສະບັບນີ້ມີຜົນສັກສິດບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ.

ບຸນຍັງ ວໍລະຈິດ